ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 1712/ຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ກໍລະກົດ 2025

# ໜັງສືເຊີນ

**ຮຽນ:** ..........................................................................................................

..........................................................................................................ທີ່ນັບຖື,

**ເລື່ອງ: ເຊີນເຂົ້າຮ່ວມ ກອງປະຊຸມປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ (Chair and Co-Chair of Sector Working Groups Meeting)**

- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງ ແລະ ການນຳໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຮ່ວມມື ແລະ ການເງິນສາກົນ ສະບັບເລກທີ 0049/ກຮງ, ລົງວັນທີ 08 ກໍລະກົດ 2025;
- ອີງຕາມ ແຜນວຽກປະຈຳປີ 2025 ຂອງວຽກງານຂະບວນການໂຕະມົນ.

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ (Chair and Co-Chair of Sector Working Groups Meeting). ໂດຍການເປັນປະທານຂອງ ທ່ານ ຮອງລັດຖະມົນຕີ ກະຊວງການເງິນ ແລະ ປະທານຮ່ວມ ທ່ານ ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ. ຈຸດປະສົງຂອງກອງປະຊຸມແມ່ນ: (1) ນຳສະເໜີ ຮ່າງທີ 4 ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026 – 2030) ແລະ ຮ່າງຍຸດທະສາດດ້ານການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ; (2) ຄວາມຄືບໜ້າໃນການກະກຽມຈັດກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ໃນປີ 2025. *(ລາຍລະອຽດແມ່ນໄດ້ຄັດຕິດມາພ້ອມນີ້).*

- **ວັນທີ: 18 ກໍລະກົດ 2025; ເວລາ: 08:30 – 12:00 ໂມງ;**
- **ສະຖານທີ່: ໂຮງແຮມ ຮໍລິເດ ອິນ ແອນ ສະຫວີທສ໌ວຽງຈັນ, ນະຄອນຫຼວງວຽງຈັນ.**

ຫວັງຢ່າງຍິ່ງວ່າທ່ານຄົງຈະສະຫຼະເວລາ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງການເງິນ ຫ້ອງການ

**ສົມຈິດ ຄຳນຸງຄຸນ**

ກະລຸນາຢັ້ງຢືນລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ກ່ອນວັນທີ: 15 ກໍລະກົດ 2025
ຕິດຕໍ່: ທ່ານ ບຸນທະສິນ ໄຊຍະລາດ, Tel: 20 22043347, bounthasinx@gmail.com
CC: rtpsecretariat@gmail.com